ທະນາຄານພັດທະນາອາຊີ
ຂໍ້ມູນພື້ນຖານຂອງປະເທດສະມາຊິກ



ການດຳເນີນງານຂອງ ເອດີບີ ໃນ ສປປ ລາວ ແມ່ນສຸມໃສ່ປັບປຸງການເຊື່ອມຕໍ່ດ້ານພື້ນຖານໂຄງລ່າງເພື່ອຊຸກຍູ້ການລົງທຶນຂອງພາກເອກະຊົນ, ສ້າງວຽກເຮັດງານທຳ ແລະ ເພີ່ມລາຍໄດ້; ພັດທະນາ ທັກສະທີ່ຈະສົ່ງເສີມຂະແໜງທີ່ບໍ່ແມ່ນຊັບພະຍາກອນ ແລະ ຂະຫຍາຍ ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ເພື່ອເພີ່ມຜະລິດຕະພາບຂອງແຮງງານໃຫ້ສູງຂື້ນ.

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ຕະຫຼອດໄລຍະ 5 ປີທີ່ຜ່ານມາເສດຖະກິດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ຂະຫຍາຍໂຕສະເລ່ຍ7% ຕໍ່ປີ, ແຕ່ແນວໃດກໍ່ຕາມ, ຍັງຄົງມີຫຼາຍວຽກທີ່ຈະຕ້ອງແກ້ໄຂ ບັນດາສິ່ງທ້າທາຍດ້ານການພັດທະນາຂອງປະເທດ.

ພາຍໃຕ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 8, 2016– 2020, ສປປ ລາວ ພວມແນໃສ່ການຂະຫຍາຍໂຕທາງດ້ານເສດຖະກິດແບບທົ່ວເຖິງ, ການພັດທະນາຊັບພະຍາກອນມະນຸດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ເພື່ອຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາໃນປີ 2024.

ໃນຂະນະທີ່ ສປປ ລາວ ມີຄວາມອຸດົມຮັ່ງມີທາງດ້ານຊັບພະຍາກອນ ແລະ ມີອຸດສາຫະກຳພະລັງງານ ແລະ ບໍ່ແຮ່ທີ່ຂະຫຍາຍໂຕໄວ, ການສ້າງຄວາມຫຼາກຫຼາຍທາງດ້ານເສດຖະກິດແມ່ນມີຄວາມຈຳເປັນເພື່ອຂະຫຍາຍການລົງທຶນຂອງພາກເອກະຊົນ, ການສ້າງວຽກເຮັດງານທຳໃນຂະແໜງບໍລິການ ແລະ ອຸດສາຫະກຳ ແລະ ສົ່ງເສີມການຮ່ວມມືແລະ ການເຊື່ອມໂຍງເຂົ້າກັບພາກພື້ນ. ໃນດ້ານການຄຸ້ມຄອງເສດຖະກິດມະຫາພາກ, ລັດຖະບານແຫ່ງ ສປປ ລາວ ໄດ້ມີຄວາມພະຍາຍາມ ເພື່ອຫຼຸດຜ່ອນການເພີ່ມຂຶ້ນຂອງການຂາດດຸນງົບປະມານ ແລະ ໜີ້ສາທາລະນະໂດຍການປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສາທາລະນະໃນເດືອນ ສິງຫາ 2018. ຈຳເປັນຈະຕ້ອງມີຫຼາຍມາດຕະການ ຕໍ່ໄປເພື່ອຫຼຸດການຂາດດຸນງົບປະມານ ແລະ ປັບປຸງຄວາມຍືນຍົງດ້ານໜີ້ສິນສາທາລະນະຂອງປະເທດຈາກສະພາບຫຍຸ້ງຍາກໃນປັດຈຸບັນ.

ທະນາຄານພັດທະນາອາຊີ (ເອດີບີ) ໄດ້ໃຫ້ການສະໜັບສະໜູນ ສປປ ລາວ ນັບແຕ່ປີ 1968 ເປັນຕົ້ນມາ ແລະ ຍັງຄົງເປັນໜຶ່ງໃນບັນດາສະຖາບັນການເງິນຫຼາຍຝ່າຍໃຫຍ່ທີ່ສຸດໃນປະເທດ ທີ່ໄດ້ສະໜອງເງິນກູ້, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ ຊຶ່ງມີມູນຄ່າທັງໝົດ $ 2,65 ຕື້.

ການເບີກ-ຈ່າຍ ເງິນກູ້ ແລະ ທຶນຊ່ວຍເຫຼືອລ້າໃຫ້ແກ່ ສປປ ລາວ ສະສົມມາຮອດປະຈຸບັນແມ່ນ $1,98 ຕື້. ຈຳນວນເງິນດັ່ງກ່າວນີ້ແມ່ນມາຈາກແຫຼ່ງທຶນທົ່ວໄປ, ຜ່ອນຜັນ, ແລະ ຈາກກອງທຶນພັດທະນາອາຊີ.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ເງິນກູ້, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ ໃນປີ 2018 (ລ້ານ $)

| ເງິນກູ້ | | | | |
|---|---|---|---|---|
| ພາກລັດ | ບໍ່ແມ່ນພາກລັດ | ການຊ່ວຍເຫຼືອດ້ານວິຊາການ | ທຶນຊ່ວຍເຫຼືອລ້າ | **ລວມທັງໝົດ** |
| – | – | 3,30 | 196,00 | **199,30** |

- ບໍ່ມີຂໍ້ມູນ.

ໝາຍເຫດ: ພັນທະສັນຍາແມ່ນ ການສະໜອງທຶນທີ່ໄດ້ຮັບອະນຸມັດຈາກສະພາຜູ້ບໍລິຫານ ຫຼື ການຄຸ້ມຄອງຂອງເອດີບີ ເຊິ່ງສັນຍາການລົງທຶນໄດ້ຮັບການລົງນາມໂດຍຜູ້ກູ້, ຜູ້ຮັບ ຫຼື ບໍລິສັດຜູ້ລົງທຶນ ແລະ ເອດີບີ.

ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການລວມທັງການສະໜອງທຶນຮ່ວມທີ່ບໍລິຫານໂດຍເອດີບີ.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ມູນຄ່າສະສົມຂອງການກູ້ຢືມທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການຕາມພັນທະສັນຍາ[a, b, c]

| ຂະແໜງ | ຈຳນວນ | ຈຳນວນລວມທັງໝົດ (ລ້ານ $)[d] | %[d] |
|---|---|---|---|
| ກະສິກຳ, ຊັບພະຍາກອນທຳມະຊາດ ແລະ ການພັດທະນາຊົນນະບົດ | 96 | 518,90 | 18,75 |
| ສຶກສາ | 37 | 264,07 | 9,54 |
| ພະລັງງານ | 49 | 508,74 | 18,38 |
| ການເງິນ | 35 | 95,88 | 3,46 |
| ສາທາ | 29 | 159,68 | 5,77 |
| ອຸດສາຫະກຳ ແລະ ການຄ້າ | 21 | 110,57 | 4,00 |
| ຫຼາຍຂະແໜງການ | 7 | 24,74 | 0,89 |
| ການຄຸ້ມຄອງຂະແໜງການລັດ | 56 | 88,07 | 3,18 |
| ຂົນສົ່ງ | 54 | 569,42 | 20,57 |
| ນ້ຳປະປາ ແລະ ພື້ນຖານໂຄງລ່າງ ແລະ ການບໍລິການໃນເຂດຕົວເມືອງ | 44 | 427,71 | 15,45 |
| **ລວມທັງໝົດ** | **428** | **2.767,78** | **100,00** |

[a] ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການລວມທັງການສະໜອງທຶນຮ່ວມທີ່ບໍລິຫານໂດຍເອດີບີ.
[b] ລວມມີ ເງິນກູ້ພາກລັດ ແລະ ບໍ່ແມ່ນພາກລັດ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ.
[c] ນຳໃຊ້ຂະແໜງການພື້ນຖານໃນການລາຍງານພັນທະສັນຍາ.
[d] ຕົວເລກລວມຕ່າງໆອາດຈະບໍ່ຊັດເຈນເນື່ອງຈາກການປັດເລກເສດສ່ວນ.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ພັນທະສັນຍາທີ່ບໍ່ແມ່ນພາກລັດຂອງແຫຼ່ງທຶນປົກກະຕິຕາມຜະລິດຕະພັນ, 2007–2018

| | |
|---|---|
| ຈຳນວນທຸລະກຳທີ່ໄດ້ລົງນາມ | 1 |
| | **ມູນຄ່າ** (ລ້ານ $) |
| ເງິນກູ້ | 144,77 |
| ການລົງທຶນໃນຫຸ້ນ | – |
| ການຄ້ຳປະກັນ | – |
| **ລວມທັງໝົດ** | 144,77 |

- ບໍ່ມີຂໍ້ມູນ.

ADB

ເຜີຍແຜ່ໃນເດືອນ ເມສາ 2019

## ໂຄງການ ແລະ ແຜນງານທີ່ເອດີບີ ໃຫ້ການສະໜັບສະໜູນ

ຕະຫຼອດຊຸມປີ 1970 ແລະ ໃນຊຸມປີ 1980, ການສະໜັບສະໜູນຂອງເອດີບີ ໃຫ້ແກ່ ສປປ ລາວ ໄດ້ສຸມໃສ່ການພັດທະນາພື້ນຖານໂຄງລ່າງ, ໂດຍສະເພາະດ້ານການຂົນສົ່ງ, ພະລັງງານ, ກະສິກຳ ແລະ ການເງິນ. ການຮ່ວມມືໄດ້ຂະຫຍາຍກວມເອົາການພັດທະນາຊົນນະບົດ, ການພັດທະນາສັງຄົມ ແລະ ຄວາມຍືນຍົງຂອງສິ່ງແວດລ້ອມ ໃນຊຸມປີ 1990 ແລະ ໃນຕົ້ນທົດສະວັດ 2000. ນັບແຕ່ປີ 2010 ເປັນຕົ້ນມາ, ການຮ່ວມມືຂອງພາກພື້ນ ແລະ ການເຊື່ອມໂຍງເຂົ້າກັບພາກພື້ນແມ່ນນອນຢູ່ໃນແຖວໜ້າຂອງຄວາມພະຍາຍາມໃນການພັດທະນາ, ໃນປັດຈຸບັນ ສປປ ລາວ ກາຍເປັນສະມາຊິກທີ່ຫ້າວຫັນຂອງ ແຜນງານຮ່ວມມືດ້ານເສດຖະກິດ ອະນຸພາກພື້ນແມ່ນ້ຳຂອງ (GMS), ປະຊາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ ແລະ ອົງການການຄ້າໂລກ.

ເມື່ອບໍ່ດົນມານີ້, ສປປ ລາວ ຖືກກີດກັ້ນຈາກຂໍ້ຈຳຈັດດ້ານຊັບພະຍາກອນມະນຸດ ແລະ ຄວາມອ່ອນໄຫວຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການເຊື່ອມໂຊມຂອງສິ່ງແວດລ້ອມ. ເຫດການນ້ຳຖ້ວມໃນໄລຍະປີ 2018 ສ້າງຄວາມເສຍຫາຍຕໍ່ການຜະລິດກະສິກຳ ແລະ ພື້ນຖານໂຄງລ່າງໃນ 15 ແຂວງ ແລະ ໃນນະຄອນຫຼວງວຽງຈັນ.

ໃນ ເດືອນ ກັນຍາ 2018, ເອດີບີໄດ້ສະໜອງທຶນຊ່ວຍເຫຼືອລ້າ $40,5 ລ້ານ ເພື່ອຊ່ວຍເຫຼືອຊາວກະສິກອນ ແລະ ທຸລະກິດດ້ານກະສິກຳເພື່ອພັດທະນາຕ່ອງໂສ້ມູນຄ່າດ້ານກະສິກຳທີ່ສາມາດດັດປັບເຂົ້າກັບສະພາບອາກາດ ດ້ວຍການປັບປຸງຜະລິດຕະພາບຂອງພືດ ເພີ່ມຄວາມຫຼາກຫຼາຍໃຫ້ແກ່ຜະລິດຕະພັນກະສິກຳ ແລະ ເພີ່ມຄວາມຢືດຢຸ່ນກັບ ການປ່ຽນແປງດິນຟ້າອາກາດຂອງກິດຈະກຳດ້ານກະສິກຳ.

ເພື່ອຂະຫຍາຍການເຂົ້າເຖິງນ້ຳປະປາ, ເອດີບີ ໄດ້ສະໜອງທຶນຊ່ວຍເຫຼືອລ້າເພີ່ມ $30,5 ລ້ານ ເພື່ອໃຫ້ລັດຖະບານສາມາດເພີ່ມອີກຫົກຕົວເມືອງເຂົ້າໃນໂຄງການນ້ຳປະປາ ແລະ ສຸຂາພິບານທີ່ກຳລັງດຳເນີນ. ການສະໜອງທຶນດັ່ງກ່າວຈະຊ່ວຍສ້າງທໍ່ສົ່ງນ້ຳປະປາຊຶ່ງມີຄວາມຍາວ 150 ກິໂລແມັດ ໃຫ້ແກ່ຜູ້ທີ່ອາໃສຈຳນວນ 100.000 ຄົນໃນຫົກເມືອງ.

ເອດີບີຍັງໄດ້ມອບທຶນຊ່ວຍເຫຼືອລ້າ $30 ລ້ານເຂົ້າໃນການດຸ່ນດ່ຽງງົບ ເພື່ອຊ່ວຍຂະຫຍາຍການປົກປ້ອງການບໍລິການດ້ານສາທາລະນະສຸກຕາມເປົ້າໝາຍຂອງລັດຖະບານ ໃນການບັນລຸການປົກຄຸມສຸຂະພາບທົ່ວປວງຊົນປີ 2025.

ໃນເດືອນ ຕຸລາ 2018, ເອດີບີໄດ້ໄດ້ຕົກລົງໃຫ້ການຊ່ວຍເຫຼືອໃນຂອບອະນຸພາກພື້ນແມ່ນ້ຳຂອງສອງໂຄງການ ທີ່ຈະໃຫ້ປະໂຫຍດແກ່ ສປປ ລາວ. ໂຄງການທຳອິດ, ເອດີບີຕົກລົງໃຫ້ທຶນຊ່ວຍເຫຼືອລ້າມູນຄ່າ $48 ລ້ານ ເພື່ອຊ່ວຍປັບປຸງການບໍລິການດ້ານສິ່ງແວດລ້ອມໃນຕົວເມືອງ ແລະ ສົ່ງເສີມການເຊື່ອມຕໍ່ດ້ານເສດຖະກິດໃນເມືອງ ປາກຊັນ ແລະ ເມືອງ ທ່າແຂກ ຕາມແລວທາງເສດຖະກິດອະນຸພາກພື້ນແມ່ນ້ຳຂອງເຂດ ພາກກາງ. ໂຄງການທີສອງ, ຍັງໄດ້ສະໜອງທຶນຊ່ວຍເຫຼືອລ້າມູນຄ່າ $47 ລ້ານ ເພື່ອປັບປ່ຽນບັນດາຕົວເມືອງຕາມແລວທາງເສດຖະກິດອະນຸພາກພື້ນແມ່ນ້ຳຂອງເຂດ ພາກກາງ ແລະ ພາກໃຕ້ໃຫ້ກາຍເປັນແຫຼ່ງທ່ອງທ່ຽວທີ່ສາມາດແຂ່ງຂັນໄດ້ ແລະ ມີຄວາມທົ່ວເຖິງທາງດ້ານເສດຖະກິດ.ເປົ້າໝາຍ. ໂຄງການດັ່ງກ່າວແມ່ນແນໃສ່ປັບປຸງພື້ນຖານໂຄງລ່າງດ້ານການຂົນສົ່ງ, ບໍລິການດ້ານສິ່ງແວດລ້ອມໃນຕົວເມືອງ ແລະ ຂີດຄວາມສາມາດຂອງພາກລັດ ເພື່ອຄຸ້ມຄອງການດ້ານການທ່ອງທ່ຽວໃຫ້ມີຄວາມຍືນຍົງ.

## ການດຳເນີນງານທີ່ບໍ່ແມ່ນພາກລັດ

ເພື່ອເປັນໂຕຜັກດັນການລົງທຶນຂອງພາກເອກະຊົນ, ເອດີບີໄດ້ໃຫ້ການຊ່ວຍເຫຼືອທາງການເງິນໂດຍກົງແກ່ໂຄງການທີ່ບໍ່ແມ່ນພາກລັດ ແລະ ເປັນໂຕກາງທາງການເງິນ. ຄຳໝັ້ນສັນຍາຈະປະກອບທຶນຂອງເອດີບີເອງ (ໃນຫຸ້ນ ແລະ ເງິນກູ້ໂດຍກົງ) ມີມູນຄ່າທັງໝົດ $3,14 ຕື້ສຳລັບ ທຸລະກຳທາງການເງິນ 32 ຄັ້ງເຂົ້າໃນການສ້າງພື້ນຖານໂຄງລ່າງເສດຖະກິດ ແລະ ສັງຄົມ, ຂະແໜງການເງິນ ແລະ ທຸລະກິດກະສິກຳ. ເອດີບີຍັງຕັ້ງໜ້າໃນການລະດົມການສະໜອງທຶນຮ່ວມຈາກແຫຼ່ງທຶນທະນາຄານ ແລະ ແບບຜ່ອນຜັນ. ປີ 2018, ເອດີບີສາມາດລະດົມທຶນໄດ້ $3,17 ຕື້ ຈາກຄູ່ຮ່ວມທຶນໄລຍະຍາວ ແລະ $3,99 ຕື້ ຂອງການສະໜອງທຶນຮ່ວມໃຫ້ແກ່ການຄ້າ, ການເງິນຈຸລະພາກ ແລະ ແຜນງານການເງິນແກ່ຕ່ອງໂສ້ສະໜອງ. ຍອດທີ່ຍັງເຫຼືອ ແລະ ພັນທະສັນຍາທັງໝົດສຳລັບການທຳທຸລະກຳທີ່ບໍ່ແມ່ນພາກລັດ ໃຊ້ທຶນຂອງເອດີບີມາຮອດວັນທີ 31 ເດືອນ ທັນວາ 2018 ມີມູນຄ່າທັງໝົດ $12,7 ຕື້.

## ການສະໜອງທຶນຮ່ວມ

ການດຳເນີນງານການສະໜອງທຶນຮ່ວມແມ່ນສາມາດເຮັດໃຫ້ຜູ້ຮ່ວມທາງການເງິນຂອງເອດີບີ, ລັດຖະບານ ຫຼື ໜ່ວຍງານຂອງລັດ, ສະຖາບັນການເງິນຫຼາຍຝ່າຍ ແລະ ອົງການທາງດ້ານການເງິນເຂົ້າຮ່ວມສະໜອງທຶນຮ່ວມໃຫ້ບັນດາໂຄງການທີ່ເອດີບີ ໃຫ້ການສະໜັບສະໜູນ. ທຶນເພີ່ມເຕີມແມ່ນສະໜອງຮູບແບບເງິນກູ້ທາງການ ແລະ ທຶນຊ່ວຍເຫຼືອລ້າ, ທຶນຊ່ວຍເຫຼືອທາງດ້ານວິຊາການ, ການສະໜອງເງິນກູ້ແບບຜ່ອນຜັນອື່ນໆ ແລະ ການສະໜອງທຶນການຄ້າ ເຊັ່ນ: ສິນເຊື່ອ B, ການຖ່າຍໂອນຄວາມສ່ຽງ, ການໃຫ້ກູ້ ແລະ ຮຸ້ນກູ້ຄູ່ຂະໜານ, ການຄ້ຳປະກັນຮ່ວມ ແລະ ການສະໜອງທຶນຮ່ວມເພື່ອທຸລະກຳພາຍໃຕ້ແຜນງານການສະໜອງທຶນເພື່ອການຄ້າຂອງເອດີບີ ແລະ ແຜນງານການສະໜອງທຶນໃຫ້ແກ່ຕ່ອງໂສ້ການສະໜອງ.

ເອດີບີເລີ່ມການດຳເນີນງານໃນການສະໜອງທຶນຮ່ວມໃນ ສປປ ລາວ ປີ 1973. ນັບແຕ່ນັ້ນມາ, ການສະໜອງທຶນຮ່ວມມູນຄ່າເພີ່ມສະສົມໂດຍກົງແມ່ນ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ສັດສ່ວນຄວາມສຳເລັດຂອງໂຄງການ

| ປີ | ສັດສ່ວນຄວາມສຳເລັດ (%) | ຈຳນວນໂຄງການແລະແຜນງານທີ່ຖືກປະເມີນຜົນຢ່າງອິດສະຫຼະ |
|---|---|---|
| 2007 | 100,0 | 1 |
| 2008 | 100,0 | 1 |
| 2009 | 50,0 | 4 |
| 2011 | 60,0 | 5 |
| 2012 | 100,0 | 3 |
| 2014 | 75,0 | 4 |
| 2015 | 66,7 | 3 |
| 2016 | 100,0 | 4 |
| 2018 | – | 1 |
| **ລວມທັງໝົດ** | **73,1** | **26** |

ໝາຍເຫດ: "ປີ" ໝາຍເຖິງ ປີຄົບຮອບການລາຍງານການເຮັດສຳເລັດໂຄງການ (PCR). ອັດຕາຄວາມສຳເລັດທີ່ໄດ້ລາຍງານແມ່ນອີງໃສ່ ການຈັດອັນດັບຈາກບົດລາຍງານການເຮັດສຳເລັດໂຄງການທີ່ໄດ້ຮັບການຮັບຮອງ ແລະ ລາຍງານການປະເມີນຜົນການປະຕິບັດງານທີ່ໄດ້ຮັບການປະເມີນແບບອິດສະຫຼະເທົ່ານັ້ນ ເຊິ່ງບໍ່ລວມເອົາການປະເມີນໂດຍຕົນເອງ. ດ້ວຍຂະໜາດຕົວຢ່າງທີ່ນ້ອຍ, ອັດຕາຄວາມສຳເລັດບໍ່ຈຳເປັນຕ້ອງສະແດງ ເຖິງການປະເມີນດ້ານການດຳເນີນງານຂອງປະເທດ.

ແຫຼ່ງຂໍ້ມູນ: ຖານຂໍ້ມູນໃນການຈັດອັນດັບຂອງບັນດາບົດລາຍງານຮັບຮອງການເຮັດສຳເລັດໂຄງການ (PCR) ແລະ ບົດລາຍງານການປະເມີນຜົນຂອງການດຳເນີນແຜນງານ/ໂຄງການ ຄັ້ງວັນທີ 31 ທັນວາ 2018.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ຕົວຊີ້ວັດຄຸນະພາບໃນການດຳເນີນງານໂຄງການ ສຳລັບໂຄງການເງິນກູ້ພາກລັດ ແລະ ທຶນຊ່ວຍເຫຼືອລ້າ, 2017–2018

| | | |
|---|---|---|
| ຈຳນວນເງິນກູ້ທີ່ກຳລັງດຳເນີນ[a] (ວັນທີ 31 ທັນວາ 2018) | | 14 |
| | **2017** (ລ້ານ $) | **2018** (ລ້ານ $) |
| ການອະນຸມັດສັນຍາ[b, c] | 54,66 | 50,30 |
| ການເບີກ-ຈ່າຍ[b] | 27,23 | 48,70 |
| ຈຳນວນໂຄງການທຶນຊ່ວຍເຫຼືອລ້າທີ່ກຳລັງດຳເນີນ[a] (ຮອດວັນທີ 31 ທັນວາ 2018) | | 18 |
| | **2017** (ລ້ານ $) | **2018** (ລ້ານ $) |
| ການອະນຸມັດສັນຍາ[b, c] | 29,48 | 28,92 |
| ການເບີກ-ຈ່າຍ[b, d] | 31,13 | 64,39 |
| ໂຄງການທີ່ມີບັນຫາຕົວຈິງ (%) (ຮອດວັນທີ 31 ທັນວາ 2018) | | 23 |

[a] ອີງຕາມພັນທະສັນຍາ.
[b] ລລວມທັງໂຄງການເງິນກູ້ຢືມ/ທຶນຊ່ວຍເຫຼືອລ້າທີ່ປິດໄປແລ້ວ ຊຶ່ງມີການອະນຸມັດສັນຍາ ຫຼື ການເບີກ-ຈ່າຍພາຍໃນປີນັ້ນໆ.
[c] ບໍ່ລວມການໃຫ້ກູ້ຢືມ/ທຶນຊ່ວຍເຫຼືອລ້າອີງຕາມນະໂຍບາຍ.
[d] ລວມມີກອງທຶນພັດທະນາອາຊີ ແລະ ກອງທຶນພິເສດອື່ນໆຂອງເອດີບີເທົ່ານັ້ນ.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ໂຄງການທີ່ໄດ້ທຶນຮ່ວມ, ວັນທີ 1 ມັງກອນ 2014–31 ທັນວາ 2018

| ການຮ່ວມໃຫ້ທຶນ | ຈຳນວນໂຄງການ | ຈຳນວນ (ລ້ານ $) |
|---|---|---|
| ໂຄງການ[a] | 9 | 667,44 |
| ທຶນຊ່ວຍເຫຼືອລ້າ | 5 | 42,78 |
| ເງິນກູ້ທາງການ | 6 | 125,26 |
| ການຮ່ວມໃຫ້ທຶນທາງດ້ານການຄ້າ | 1 | 499,40 |
| ທຶນຊ່ວຍເຫຼືອລ້າທາງດ້ານວິຊາການ | 5 | 8,80 |

[a] ໂຄງການທີ່ມີແຫຼ່ງຮ່ວມໃຫ້ທຶນຫຼາຍກວ່າໜຶ່ງແຫຼ່ງແມ່ນນັບຄັ້ງດຽວ.

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ສ່ວນແບ່ງສັນຍາຈັດຊື້ຈັດຈ້າງສຳລັບໂຄງການເງິນກູ້, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ

| | 2017 | | 2018 | | ສະສົມ (ວັນທີ 31 ທັນວາ 2018) | |
|---|---|---|---|---|---|---|
| ລາຍການ | ຈຳນວນ (ລ້ານ $) | % ຂອງຈຳນວນທັງໝົດ | ຈຳນວນ (ລ້ານ $) | % ຂອງຈຳນວນທັງໝົດ | ຈຳນວນ (ລ້ານ $) | % ຂອງຈຳນວນທັງໝົດ |
| ສິນຄ້າ, ວຽກ ແລະ ບໍລິການທີ່ກ່ຽວຂ້ອງ | 68,19 | 0,67 | 93,91 | 0,75 | 1.007,56 | 0,56 |
| ບໍລິການໃຫ້ຄຳປຶກສາ | 12,31 | 1,65 | 4,29 | 0,62 | 79,31 | 0,62 |
| **ການຈັດຊື້-ຈັດຈ້າງທັງໝົດ** | **80,51** | **0,74** | **98,19** | **0,74** | **1.086,87** | **0,56** |

### ຜູ້ຮັບເໝົາ/ຜູ້ສະໜອງ 5 ອັນດັບຕົ້ນຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີສ່ວນກ່ຽວຂ້ອງໃນການສະໜອງສິນຄ້າ, ວຽກ ແລະ ສັນຍາການບໍລິການທີ່ກ່ຽວຂ້ອງພາຍໃຕ້ໂຄງການເງິນກູ້ ແລະ ທຶນຊ່ວຍເຫຼືອລ້າຂອງເອດີບີ, ວັນທີ 1 ມັງກອນ 2014–31 ທັນວາ 2018

| ຜູ້ຮັບເໝົາ/ຜູ້ສະໜອງ | ຂະແໜງ | ມູນຄ່າສັນຍາ (ລ້ານ $) |
| --- | --- | --- |
| ວິສາຫະກິດຮັບເໝົາກໍ່ສ້າງທາງເລກທີ 8 | IND, TRA, WUS | 24,70 |
| ບໍລິສັດ ສຸກປະເສີດ ອອກແບບການສຳຫຼວດ ແລະ ກໍ່ສ້າງຖະໜົນ, ຂົວທາງ ແລະ ຊົນລະປະທານ ຈຳກັດ ແລະ ບໍລິສັດ ພົນຊັບທະວີ ກໍ່ສ້າງຖະໜົນ ແລະ ຂົວທາງ ຈຳກັດ (JV) | ANR | 10,49 |
| ບໍລິສັດ ຈິດຈະເລີນ ກໍ່ສ້າງ ຈຳກັດ | IND | 9,57 |
| ບໍລິສັດ ສຸກປະເສີດ ອອກແບບສຳຫຼວດ ແລະ ກໍ່ສ້າງຖະໜົນ, ຂົວທາງ ແລະ ຊົນລະປະທານ ຈຳກັດ | ANR | 6,23 |
| ກຸ່ມບໍລິສັດ ດີເອັມ ຈຳກັດຜູ້ດຽວ | WUS | 5,67 |
| ອື່ນໆ | | 243,76 |
| **ລວມທັງໝົດ** | | **300,42** |

ANR = ກະສິກຳ, ຊັບພະຍາກອນທຳມະຊາດ ແລະ ການພັດທະນາຊົນນະບົດ; IND = ອຸດສາຫະກຳ ແລະ ການຄ້າ; TRA = ຂົນສົ່ງ; WUS = ນໍ້າ ແລະ ພື້ນຖານໂຄງລ່າງຂອງຕົວເມືອງ ແລະ ການບໍລິການຕ່າງໆ.

### ທີ່ປຶກສາ 5 ອັນດັບຕົ້ນຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີສ່ວນກ່ຽວຂ້ອງໃນສັນຍາບໍລິການທີ່ປຶກສາ ພາຍໃຕ້ໂຄງການເງິນກູ້ຢືມ, ທຶນຊ່ວຍເຫຼືອລ້າ ແລະ ການຊ່ວຍເຫຼືອທາງດ້ານວິຊາການຂອງເອດີບີ, ວັນທີ 1 ມັງກອນ 2014–31 ທັນວາ 2018

| ທີ່ປຶກສາ | ຂະແໜງ | ຈຳນວນສັນຍາ (ລ້ານ $) |
| --- | --- | --- |
| ລາວ ຄອນຊາວຕິ້ງກຣຸບ ຈຳກັດ | ANR, WUS | 16,24 |
| ກຸ່ມບໍລິສັດ ທີ່ປຶກສາ ລາວ-ອາຊີ ຈຳກັດ | ANR, EDU, MUL, TRA | 2,87 |
| ບໍລິສັດ ທີ່ປຶກສາ ລາວ ວິສະວະກຳ | ANR | 1,07 |
| ບໍລິສັດ ບໍລິການບັນຊີ ແລະ ກວດສອບ ຈຳກັດ | ANR, HLT | 0,76 |
| ບໍລິສັດ ໂຮມ ຄອນຊາວຕິງ ເອນຈິເນຍ ຈຳກັດຜູ້ດຽວ | ANR | 0,74 |
| ທີ່ປຶກສາສ່ວນບຸກຄົນ | | 9,03 |
| ອື່ນໆ | | 6,65 |
| **ລວມທັງໝົດ** | | **37,36** |

ANR = ກະສິກຳ, ຊັບພະຍາກອນທຳມະຊາດ ແລະ ການພັດທະນາຊົນນະບົດ; EDU = ສຶກສາ; HLT = ສາທາ; MUL = ຫຼາຍຂະແໜງການ; TRA = ຂົນສົ່ງ; WUS = ນໍ້າ ແລະ ພື້ນຖານໂຄງລ່າງຂອງຕົວເມືອງ ແລະ ການບໍລິການຕ່າງໆ.

$370,82 ລ້ານສຳລັບ 33 ໂຄງການ ແລະ $49,03 ລ້ານສຳລັບໂຄງການຊ່ວຍເຫຼືອທາງດ້ານວິຊາການ 56 ໂຄງການ. ການສະໜອງທຶນຮ່ວມທີ່ມີມູນຄ່າເພີ່ມສະສົມໂດຍກົງທີ່ມີຮູບແບບການຄ້າ ສຳລັບ ສປປ ລາວ ມີມູນຄ່າ ລວມທັງໝົດ $499,4 ລ້ານສຳລັບໂຄງການລົງທຶນດຽວ.

ບົດສະຫຼຸບໂຄງການທີ່ໄດ້ຮັບ ການສະໜອງທຶນຮ່ວມ ນັບແຕ່ວັນທີ 1 ມັງກອນ 2014 ຫາວັນທີ 31 ທັນວາ 2018 ມີໃຫ້ທີ່ www.adb.org/countries/lao-pdr/cofinancing.

## ການຮ່ວມມື

ເອດີບີໄດ້ສ້າງຕັ້ງສຳນັກງານປະຈຳປະເທດໃນ ສປປ ລາວ ໃນປີ 2001. ສຳນັກງານປະຈຳປະເທດໄດ້ປະສານງານຢ່າງຕັ້ງໜ້າ ກັບບັນດາຄູ່ຮ່ວມພັດທະນາໃນການສະໜອງທຶນຮ່ວມ ແລະ ຮ່ວມມືກັນ, ໄປຄຽງຄູ່ກັບບັນດາອົງການຈັດຕັ້ງສັງຄົມທັງສາກົນ ແລະ ພາຍໃນ, ໃນຂະນະທີ່ທຳໜ້າທີ່ທີ່ມີບົດບາດສຳຄັນໃນຂະບວນການກອງປະຊຸມໂຕະມົນ.

ເອດີບີ ຍັງເປັນປະທານຮ່ວມຂອງຄະນະເຮັດວຽກເສດຖະກິດມະຫາພາກ ແລະ ຂະແໜງພື້ນຖານໂຄງລ່າງ ຂອງ ສປປ ລາວ. ໃນເດືອນ ທັນວາ 2018, ສຳນັກງານປະຈຳປະເທດໄດ້ປະກອບສ່ວນຢ່າງມີຄວາມໝາຍສຳຄັນຕໍ່ກັບຜົນສຳເລັດຂອງກອງປະຊຸມໂຕະມົນທີ່ນະຄອນຫຼວງວຽງຈັນ.

## ການຈັດຊື້-ຈັດຈ້າງ

ແຕ່ລະປີ, ເອດີບີສະໜອງເງິນກູ້, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການເພື່ອສະໜັບສະໜູນບັນດາໂຄງການ ແລະ ກິດຈະກຳຕ່າງໆໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາຂອງຕົນ ແລະ ຫຼາຍຕື້ໂດລາສະຫະລັດໃນສັນຍາເພື່ອຈັດຊື້-ສິນຄ້າຈັດຈ້າງ, ວຽກ ແລະ ການບໍລິການທີ່ປຶກສາ. ສັນຍາສ່ວນຫຼາຍທີ່ໄດ້ມອບໃຫ້ແມ່ນບົນພື້ນຖານການແຂ່ງຂັນລະດັບສາກົນ, ເຊິ່ງເປີດກວ້າງໃຫ້ບໍລິສັດ ແລະ ນິຕິບຸກຄົນຈາກບັນດາປະເທດສະມາຊິກຂອງເອດີບີທັງໃນພາກພື້ນ ຫຼື ນອກເຂດພາກພື້ນ.

## ສ່ວນແບ່ງຂອງມູນຄ່າສັນຍາການຈັດຊື້-ຈັດຈ້າງຂອງເອດີບີ

### ສິນຄ້າ, ວຽກ ແລະ ບໍລິການທີ່ກ່ຽວຂ້ອງ

ສັນຍາຈັດຊື້-ຈັດຈ້າງຂອງເອດີບີໃນອາຊີ ແລະ ປາຊີຟິກ ສຳລັບສິນຄ້າ, ວຽກ ແລະ ບໍລິການທີ່ກ່ຽວຂ້ອງ ພາຍໃຕຈັດຕັ້ງປະຕິບັດໂຄງການເງິນກູ້ ແລະ ທຶນຊ່ວຍເຫຼືອລ້າມີມູນຄ່າລວມທັງໝົດ $10,2 ຕື້ໃນປີ 2017 ແລະ $12,55 ຕື້ໃນປີ 2018. ການຈັດຊື້-ຈັດຈ້າງສະສົມນັບແຕ່ປີ 1966 ລວມມູນຄ່າທັງໝົດແມ່ນ $180,86 ຕື້ເຊິ່ງກວມເອົາ 215.461 ສັນຍາ.

ໃນ ສປປ ລາວ, ນັບແຕ່ປີ 1966 ເປັນຕົ້ນມາ 4.599 ສັນຍາໄດ້ຖືກເຊັນລວມມູນຄ່າທັງໝົດ $1,01 ຕື້.

### ບໍລິການທີ່ປຶກສາ

ສັນຍາຈັດຊື້-ຈັດຈ້າງຂອງເອດີບີໃນອາຊີ ແລະ ປາຊີຟິກ ສຳລັບບໍລິການທີ່ປຶກສາ ພາຍໃຕ້ການດຳເນີນງານຂອງເງິນກູ້, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ ລວມມີມູນຄ່າທັງໝົດ $746,79 ລ້ານໃນປີ 2017 ແລະ $696,18 ລ້ານໃນປີ 2018. ການຈັດຊື້-ຈັດຈ້າງສະສົມນັບແຕ່ປີ 1966 ມີມູນຄ່າທັງໝົດ $12,7 ຕື້, ກວມເອົາ 59.248 ສັນຍາ.

ນັບແຕ່ປີ 1966 ເປັນຕົ້ນມາໄດ້ມີການວ່າຈ້າງທີ່ປຶກສາ 788 ສັນຍາ ເຊິ່ງມີມູນຄ່າທັງໝົດ $79,31 ລ້ານ.

## ສິ່ງທ້າທາຍໃນການດຳເນີນງານ

ຄວາມຊັກຊ້າຂອງການເລີ່ມຈັດຕັ້ງປະຕິບັດໂຄງການໃນ ສປປ ລາວ ແມ່ນໄດ້ຮັບການແກ້ໄຂ ໂດຍການນຳໃຊ້ມາດຕະການເຂັ້ມງວດເພື່ອປັບປຸງຄວາມພ້ອມຂອງໂຄງການ, ຊຶ່ງລວມທັງການກະກຽມອອກແບບທີ່ລະອຽດທາງວິສະວະກອນ ແລະ ເອດີບີໃຫ້ການສະໜັບສະໜູນໃຫ້ມີການດຳເນີນການລ່ວງໜ້າໃນການຮັບສະໝັກ ແລະ ການຈັດຊື້-ຈັດຈ້າງປຶກສາ. ການປະຕິບັດຕາມນະໂຍບານປົກປ້ອງໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ, ໂດຍເອດີບີບັງຄັບໃຊ້ມາດຕະການດ້ານສັງຄົມ ແລະ ສິ່ງແວດລ້ອມຢ່າງເຂັ້ມງວດ ເພື່ອຫຼຸດຜ່ອນ ຫຼື ຫຼຸດຜົນກະທົບໃນທາງລົບຈາກໂຄງການ.

ສຳນັກງານປະຈຳ ສປປ ລາວ ໄດ້ດຳເນີນມາດຕະການເພື່ອປັບປຸງຄຸນະພາບ ບົດລາຍງານການກວດສອບການເງິນຂອງໂຄງການ ເພື່ອຮັບປະກັນວ່າເງິນຂອງໂຄງການຖືກນຳໃຊ້ຕາມຈຸດປະສົງທີ່ກຳນົດໄວ້. ເພື່ອປັບປຸງຄວາມສາມາດໃນການຄຸ້ມຄອງການເງິນ ແລະ ການຈັດຊື້-ຈັດຈ້າງ, ເອດີບີໄດ້ດຳເນີນການຝຶກອົບຮົມຢ່າງຕໍ່ເນື່ອງກ່ຽວກັບການຈັດຊື້-ຈັດຈ້າງ, ການເບີກ-ຈ່າຍ, ການປະຕິບັດຕາມນະໂຍບາຍປົກປ້ອງ ແລະ ພ້ອມທັງການຄຸ້ມຄອງດ້ານການເງິນ ໃຫ້ແກ່ບັນດາໜ່ວຍງານຈັດຕັ້ງປະຕິບັດ ແລະ. ໜ່ວຍງານເຈົ້າຂອງໂຄງການ

## ທິດທາງໃນຕໍ່ໜ້າ

ຍຸດທະສາດການຮ່ວມມືກັບປະເທດຂອງເອດີບີ (CPS), 2017-2020 ສຳລັບ ສປປ ລາວ ປະສົມປະສານຄວາມຮູ້ທີ່ໄດ້ປະຕິບັດກັບການສະໜອງເງິນເພື່ອຊ່ວຍໃຫ້ລັດຖະບານບັນລຸຄວາມຕ້ອງການຜົນໄດ້ຮັບຂອງການພັດທະນາ.

ພາຍໃຕ້ CPS, ການດຳເນີນງານຂອງເອດີບີແມ່ນແນໃສ່ປັບປຸງການເຊື່ອມຕໍ່ທາງດ້ານພື້ນຖານໂຄງລ່າງ ເພື່ອຊຸກຍູ້ການລົງທຶນຂອງພາກເອກະຊົນ, ສ້າງວຽກເຮັດງານທຳ ແລະ ເພີ່ມລາຍໄດ້; ພັດທະນາທັກສະທີ່ຈະສົ່ງເສີມຂະແໜງການທີ່ບໍ່ແມ່ນຊັບພະຍາກອນ ແລະ ຂະຫຍາຍການເຂົ້າເຖິງບໍລິການດ້ານສາທາລະນະສຸກເພື່ອເພີ່ມຜະລິດຕະພາບໃຫ້ແກ່ແຮງງານ. ການລົງທຶນຂອງເອດີບີຍັງຈະຊ່ວຍຮັບປະກັນການຄຸ້ມຄອງຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ ແລະ ເພີ່ມທະວີຄວາມສາມາດໃນການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ໃນຂະນະທີ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການປົກຄອງບໍລິຫານທີ່ມີປະສິດທິຜົນ ແມ່ນວຽກທີ່ຕິດພັນກັບທຸກຂະແໜງການ.

ການຊ່ວຍເຫຼືອຂອງເອດີບີໃນການຮ່ວມມື ແລະ ການເຊື່ອມໂຍງພາກພື້ນ ຈະຢູ່ບົນພື້ນຖານການສະໜັບສະໜູນທີ່ຍາວນານ ສຳລັບແຜນງານຮ່ວມມືດ້ານເສດຖະກິດອະນຸພາກພື້ນແມ່ນໍ້າຂອງ, ໂດຍສະເພາະໃນການເພີ່ມການເຊື່ອມຕໍ່, ການສົ່ງເສີມທາງດ້ານການຄ້າ ແລະ ການລົງທຶນ, ການຮັບປະກັນຄວາມ

ປອດໄພດ້ານສຸຂະພາບ ແລະ ການປຶກສາຫາລືລະດັບນະໂຍບາຍ ເພື່ອການຄຸ້ມຄອງສິ່ງແວດລ້ອມທີ່ມີປະສິດທິຜົນພາບ. ການລົງທຶນລະດັບພາກພື້ນແມ່ນເນັ້ນຄວາມສຳຄັນໃສ່ການພັດທະນາ ແລວທາງເສດຖະກິດເພື່ອເປີດປະຕູສູ່ ສປປ ລາວ ທີ່ບໍ່ມີທາງອອກສູ່ທະເລ ແລະ ຊ່ວຍຫຼຸດຜ່ອນຊ່ອງຫວ່າງການພັດທະນາ ໃນບັນດາແຂວງທີ່ທຸກຍາກໃນຂອງປະເທດ. ເອດີບີຈະເລີ່ມກະກຽມ CPS, ປີ 2021–2025 ສຳລັບ ສປປ ລາວ ໃນປີ 2019.

## ກ່ຽວກັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ເອດີບີ

**ການເຂົ້າເປັນສະມາຊິກຂອງເອດີບີ**
ໄດ້ເຂົ້າເປັນສະມາຊິກໃນປີ 1966

**ສິດອຳນາດໃນການຖືຫຸ້ນ ແລະ ການລົງຄະແນນ**

| | |
|---|---|
| ຈຳນວນຫຸ້ນທີ່ຖື: | 1.476 (0,014% ຂອງຫຸ້ນທັງໝົດ) |
| ການລົງຄະແນນ: | 41.173 (0,310% ຂອງສະມາຊິກທັງໝົດ, 0,476% ຂອງສະມາຊິກໃນລະດັບພາກພື້ນ) |
| ທຶນປະກອບສ່ວນທັງໝົດ: | $20,53 ລ້ານ |
| ທຶນປະກອບສ່ວນທີ່ຊຳລະແລ້ວ: | $1,28 ລ້ານ |

**ທ່ານ ຊາທຣາປາຕີ ຊີວາຈີ** ເປັນຫົວໜ້າອຳນວຍການ ແລະ **ທ່ານ ເບຣຳມູຣາມເມັດ ກາຣາຢ້ອບ** ເປັນຮອງຫົວໜ້າອຳນວຍການ ເຊິ່ງເປັນຕົວແທນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ຢູ່ໃນສະພາບໍລິຫານຂອງເອດີບີ.

**ທ່ານ ຢະຊູຊິ ເນກິຊິ** ເປັນຜູ້ຕາງໜ້າເອດີບີປະຈຳຢູ່ ສປປ ລາວ. ສຳນັກງານທະນາຄານພັດທະນາອາຊີປະຈຳ ສປປ ລາວ ໄດ້ໄຂຂຶ້ນໃນເດືອນກໍລະກົດ 2001 ແລະ ໄດ້ໃຫ້ການການເຊື່ອມຕໍ່ບັນດາການດຳເນີນງານກິດຈະກຳຕ່າງໆລະຫວ່າງເອດີບີ ແລະ ລັດຖະບານ, ພາກເອກະຊົນ, ຜູ້ມີສ່ວນຮ່ວມ ແລະ ຄູ່ຮ່ວມພັດທະນາ. ສຳນັກງານປະຈຳປະເທດມີສ່ວນຮ່ວມເຂົ້າໃນການປຶກສາຫາລືນະໂຍບາຍ, ການພັດທະນາ ແລະ ກຳນົດແຜນງານຍຸດທະສາດເພື່ອການຮ່ວມມືກັບປະເທດ ແລະ ການຄຸ້ມຄອງໂຄງການ, ພ້ອມກັນນັ້ນ, ກໍ່ທຳໜ້າທີ່ສະໜອງພື້ນຖານຄວາມຮູ້ກ່ຽວກັບບັນຫາການພັດທະນາໃນ ສປປ ລາວ.

ອົງການຂອງລັດຖະບານ ສປປ ລາວ ທີ່ຮັບຜິດຊອບເອດີບີ ແມ່ນກົມຮ່ວມມືສາກົນຂອງກະຊວງແຜນການ ແລະການລົງທຶນ ແລະ ກົມການເງິນຕ່າງປະເທດຂອງກະຊວງການເງິນ.

## ກ່ຽວກັບທະນາຄານພັດທະນາອາຊີ

ເອດີບີແມ່ນທະນາຄານພັດທະນາຫຼາຍຝ່າຍ ເຊິ່ງເປັນເຈົ້າຂອງໂດຍ 68 ປະເທດ, ຊຶ່ງໃນນັ້ນມີ 49 ປະເທດມາຈາກພາກພື້ນອາຊີປາຊີຟິກ ແລະ 19 ປະເທດມາຈາກພາກພື້ນອື່ນໃນໂລກ. ເຄື່ອງມືຕົ້ນຕໍຂອງເອດີບີໃນການຊ່ວຍບັນດາປະເທດສະມາຊິກທີ່ກຳລັງພັດທະນາແມ່ນ ການປຶກສາຫາລືລະດັບນະໂຍບາຍ, ເງິນກູ້, ການລົງທຶນໃນຫຸ້ນສ່ວນ, ການຄ້ຳປະກັນ, ທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການ. ໃນປີ 2018, ປະລິມານການໃຫ້ເງິນກູ້ລວມມູນຄ່າທັງໝົດ $19,88 ຕື້ (126 ໂຄງການ), ພ້ອມດ້ວຍທຶນຊ່ວຍເຫຼືອທາງດ້ານວິຊາການລວມມູນຄ່າທັງໝົດ $241,20 ຕື້ (280 ໂຄງການ) ແລະ ໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອລ້າລວມມູນຄ່າທັງໝົດ $1,42 ລ້ານ (44 ໂຄງການ). ນອກນັ້ນ, ຍັງໄດ້ທຶນຮ່ວມສົມທົບລວມມູນຄ່າທັງໝົດ $14 ຕື້ ທີ່ລະດົມໄດ້ຈາກການສະໜອງທຶນຮ່ວມມູນຄ່າເພີ່ມໂດຍກົງໃນຮູບແບບເງິນກູ້ ແລະ ທຶນຊ່ວຍເຫຼືອລ້າທາງການ, ການສະໜອງທຶນຮ່ວມທີ່ໄດ້ຮັບການຈັດສັນ, ການສະໜອງທຶນຮ່ວມເພື່ອການຄ້າເຊັ່ນ: ເງິນກູ້ B, ການຈັດການໂອນຄວາມສ່ຽງ, ການຄ້ຳປະກັນການສະໜອງທຶນຮ່ວມ, ເງິນກູ້ຄູ່ຂະໜານ, ຫຸ້ນຄູ່ຂະໜານ ແລະ ການສະໜອງທຶນຮ່ວມໃນການທຸລະກຳພາຍໃຕ້ແຜນງານການເງິນເພື່ອການຄ້າຂອງເອດີບີ. ນັບແຕ່ວັນທີ 1 ມັງກອນ 2014 ຫາວັນທີ 31 ທັນວາ 2018, ປະລິມານການໃຫ້ເງິນກູ້ປະຈຳປີຂອງເອດີບີສະເລ່ຍປະມານ $15,99 ຕື້. ນອກນັ້ນ, ການລົງທຶນທີ່ເປັນທຶນຊ່ວຍເຫຼືອລ້າ ແລະ ທຶນຊ່ວຍເຫຼືອທາງດ້ານວິຊາການຈາກເອດີບີ ແລະ ແຫຼ່ງທຶນພິເສດ ສະເລ່ຍປະມານ $583,95 ລ້ານ ແລະ $184 ລ້ານໃນໄລຍະດຽວກັນ. ຄັ້ງວັນທີ 31 ທັນວາ 2018, ມູນຄ່າສະສົມລວມທັງໝົດຊຶ່ງບໍ່ລວມມູນຄ່າການສະໜອງທຶນຮ່ວມ ແມ່ນ $275,82 ຕື້ ໃນຮູບແບບເງິນກູ້ສຳລັບ 3.090 ໂຄງການໃນ 44 ປະເທດ, $9,38 ຕື້ ສຳລັບ 374 ໂຄງການທຶນຊ່ວຍເຫຼືອລ້າ ແລະ $4,52 ຕື້ ສຳລັບໂຄງການຊ່ວຍເຫຼືອທາງດ້ານວິຊາການ ໃນນັ້ນລວມທັງ ໂຄງການທຶນຊ່ວຍເຫຼືອລ້າທາງດ້ານວິຊາການພາກພື້ນ.

## ຂໍ້ມູນເພີ່ມເຕີມຕິດຕໍ່


ທະນາຄານພັດທະນາອາຊີ
ຕັ້ງຢູ່ທີ່ຫົວມຸມຂອງຖະໜົນລ້ານຊ້າງ ແລະ
ຖະໜົນສາມແສນໄທ, ຕູ້ໄປສະນີ 9724:
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ:
ໂທ +856-21-250444
ແຟັກ +856-21-250333
adblrm@adb.org
www.adb.org/lao-pdr

**ສຳນັກງານໃຫຍ່ຂອງເອດີບີ**
ຖະໜົນ 6 ເອດີບີ, ເມືອງ ມັນດາລູຢົງ
1550 ກຸງມະນີລາ, ປະເທດຟີລິບປິນ
ໂທ +63 2 8632 4444
ແຟັກ +63 2 8636 2444
(ກະລຸນາຕັດ “8” ອອກຈາກໝາຍເລກສຳນັກງານໃຫຍ່ຂອງເອດີບີ ຈົນກວ່າໝາຍເລກໃນເມືອງມະນີລາຈະປ່ຽນແປງໃນວັນທີ 8 ຕຸລາ 2019).

ຖະໜົນ 23 ສິງຫາ, ຕູ້ໄປສະນີ 46
ນະຄອນຫຼວງວຽງຈັນ, ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ
ໂທ +856-21-412142/911611
ແຟັກ +856-21-412142
www.mof.gov.la


**ເວັບໄຊທີ່ເປັນປະໂຫຍດຂອງເອດີບີ**

ທະນາຄານພັດທະນາອາຊີ
www.adb.org

ບົດລາຍງານປະຈຳປີ
www.adb.org/documents/series/adb-annual-reports

ບົດລາຍງານການຄາດຄະເນການພັດທະນາອາຊີ
www.adb.org/publications/series/asian-development-outlook

ຫ້ອງສະໝຸດ
data.adb.org

ໝາຍເຫດ:
ເອດີບີຕ້ອນຮັບ Niue ເປັນປະເທດສະມາຊິກທີ 68 ໃນເດືອນ ມີນາ 2019.
ຕົວເລກໄດ້ປະມານໄວ້ໂດຍ ເອດີບີ ນອກສະຈາກວ່າມີການອ້າງອີງຂອງຂໍ້ມູນຕົວເລກ. “$” ໝາຍເຖິງໂດລາສະຫະລັດ.
ຂໍ້ມູນແມ່ນເກັບກຳໄດ້ຄັ້ງວັນທີ 31 ທັນວາ 2018 ນອກສະຈາກວ່າມີການອ້າງອີງເຖິງຂໍ້ມູນດັ່ງກ່າວ. ເອກະສານຂໍ້ມູນພື້ນຖານແມ່ນໄດ້ຮັບການປັບປຸງໃນເດືອນ ເມສາ ເປັນປະຈຳທຸກປີ.